ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ກອງປະຊຸມເຜີຍແຜ່ນະໂຍບາຍສິນເຊື່ອ ເພື່ອກະຕຸ້ນເສດຖະກິດໃນ ສປປ ລາວ




ໃນຕອນເຊົ້າຂອງວັນທີ 30 ພຶດສະພາ 2023 ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດກອງປະຊຸມເຜີຍແຜ່ນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດໃນ ສປປ ລາວ ທີ່ຫ້ອງປະຊຸມຊັ້ນ 3 ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ໂດຍການເປັນປະທານຂອງທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຊຶ່ງມີຜູ້ເຂົ້າຮ່ວມທັງໝົດທັງເຊິ່ງໜ້າ ແລະ ທາງໄກ ຫຼາຍກວ່າ 100 ທ່ານ ຈາກບັນດາກະຊວງທີ່ກ່ຽວຂ້ອງ, ທະນາຄານແຫ່ງ ສປປ ລາວ ສາຂາປະຈຳພາກ, ບັນດາຄະນະເຈົ້າແຂວງ ແລະ ພະແນກການທີ່ຕິດພັນຈາກທົ່ວປະເທດ ພ້ອມທັງບັນດາທະນາຄານທຸລະກິດທີ່ດຳເນີນທຸລະກິດພາຍໃນ ສປປ ລາວ.

ຈຸດປະສົງໃນການເປີດກອງປະຊຸມເຜີຍແຜ່ໃນຄັ້ງນີ້ ເພື່ອໃຫ້ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມມີສ່ວນຮ່ວມ ແລະ ມີຄວາມເຂົ້າໃຈແຈ້ງໃນຂອດການຈັດຕັ້ງປະຕິບັດ ນະໂຍບາຍສິນເຊື່ອ ເພື່ອກະຕຸ້ນເສດຖະກິດ ຂອງ ສປປ ລາວ ລົງສູ່ທ້ອງຖິ່ນ ໃຫ້ມີປະສິດທິຜົນສູງສຸດ.



ນອກຈາກນີ້, ໃນທີ່ປະຊຸມຍັງໄດ້ຮັບຟັງການນໍາສະເໜີລາຍງານຫຍໍ້ກ່ຽວກັບການຮ່າງຂໍ້ຕົກລົງນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດ ໂດຍທ່ານ ຄໍາແກ້ວ ວິສີສົມບັດ ຫົວໜ້າກົມບໍລິການທະນາຄານ ທຫລ ຊຶ່ງໄດ້ຍົກໃຫ້ເຫັນພາບລວມ ແລະ ກົນໄກການຈັດຕັ້ງປະຕິບັດຂອງນະໂຍບາຍສິນເຊື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ຊຶ່ງປະກອບມີເງື່ອນໄຂລວມ, ການເຂົ້າຮ່ວມຮັບນະໂຍບາຍ ແລະ ກົນໄກການຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອ ເພື່ອກະຕຸ້ນເສດຖະກິດທີ່ໄດ້ກໍານົດໄວ້ນັ້ນ. ພ້ອມນີ້, ບັນດາຜູ້ເຂົ້າຮ່ວມກໍ່ໄດ້ນໍາສະເໜີບັນດາສະພາບການເຂົ້າຫາສິນເຊື່ອຂອງທ້ອງຖິ່ນໃຫ້ທີ່ປະຊຸມໄດ້ຮັບຊາບ ເພື່ອນໍາມາພິຈາລະນາ ແລະ ເຮັດໃຫ້ນະໂຍບາຍສິນເຊື່ອໃຫ້ແກ່ທ້ອງຖິ່ນໃຫ້ມີຄວາມສອດຄ່ອງກັບສະພາບເສດຖະກິດຕົວຈິງຂອງແຕ່ລະແຂວງ.

ໃນກອງປະຊຸມ ທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ຍັງໄດ້ຊຸກຍູ້ໃຫ້ບັນດາພາກສ່ວນທີ່ກ່ຽວຂ້ອງທັງຜູ້ຄຸ້ມຄອງ ແລະ ບັນດາທະນາຄານທຸລະກິດໃຫ້ສ້າງບັນດາປະຖົມປັດໄຈ ເພື່ອຮອງຮັບການຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອກະຕຸ້ນເສດຖະກິດໃຫ້ມີປະສິດທິຜົນ ແລະ ທ່ານຍັງຫວັງວ່ານະໂຍບາຍນີ້ຈະສາມາດຊ່ວຍແກ້ໄຂ ແລະ ສ້າງເງື່ອນໄຂໃຫ້ຫົວໜ່ວຍທຸລະກິດ ໃນຂະແໜງບູລິມະສິດ ຂອງລັດຖະບານສາມາດເຂົ້າຫາແຫຼ່ງທຶນທີ່ມີຕົ້ນທຶນເໝາະສົມໃນການສ້າງ, ຂະຫຍາຍ ແລະ ປັບປຸງຖານການຜະລິດ-ປຸງແຕ່ງ, ບໍລິການ-ການຄ້າຂອງຕົນ ທັງຮັບປະກັນການຜະລິດສະໜອງສະບຽງອາຫານ ແລະ ເຄື່ອງອຸປະໂພກ-ບໍລິໂພກພາຍໃນ ແລະ ສົ່ງເສີມການຜະລິດ ເພື່ອສົ່ງອອກ ໃຫ້ເຂັ້ມແຂງ.

**# ຂ່າວ-ພາບ: ພະແນກຂໍ້ມູນຂ່າວສານ ແລະ ປະຊາສໍາພັນ, ຫ້ອງການ ທຫລ.**

## ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນໍາໃຊ້ເງິນກີບ